ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2552 /ອຄ.ຄພນ

ນະຄອນຫຼວງວຽງຈັນ,ວັນທີ 14 ທັນວາ 2012

# ຂໍ້ຕົກລົງ

## ວ່າດ້ວຍອົງການປະຕິບັດວຽກງານກວດກາການຄ້າ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 552/ນຍ, ລົງວັນທີ 23 ທັນວາ 2011.
- ອີງຕາມ ດຳລັດວ່າດ້ວຍການກວດກາການຄ້າ, ສະບັບເລກທີ 508/ລບ, ລົງວັນທີ 4 ທັນວາ 2012.

ເພື່ອຜັນຂະຫຍາຍດຳລັດວ່າດ້ວຍການກວດກາການຄ້າ ເຂົ້າໃນພາກປະຕິບັດ ໃຫ້ປະກົດຜົນເປັນຈິງ,

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ 1
## ຫຼັກການທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດ ຫຼັກການ, ລະບຽບການ, ການຈັດຕັ້ງ, ການເຄື່ອນໄຫວ, ພາລະບົດບາດ, ສິດ, ໜ້າທີ່ ຂອງອົງການປະຕິບັດວຽກງານກວດກາການຄ້າ ແລະພາກສ່ວນຊ່ວຍວຽກ ແນໃສ່ເຮັດໃຫ້ ອົງການປະຕິບັດວຽກງານກວດກາການຄ້າ ແລະພາກສ່ວນຊ່ວຍວຽກ ທຸກຂັ້ນຮັບຮູ້ ແລະຈຳແນກໄດ້ພາລະບົດບາດ, ສິດ ແລະໜ້າທີ່ຂອງຕົນ ໃນການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ໃຫ້ຖືກຕ້ອງ ແລະສອດຄ່ອງກັບເນື້ອໃນຈິດໃຈ ຂອງດຳລັດວ່າດ້ວຍການກວດກາການຄ້າ.

**ມາດຕາ 2. ອົງການປະຕິບັດວຽກງານກວດກາການຄ້າ**

ອົງການປະຕິບັດວຽກງານກວດກາການຄ້າ ແມ່ນອົງການລັດທີ່ມີ ສິດອຳນາດໃນການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ເພື່ອສ້າງສະຕິ ແລະປູກຈິດສຳນຶກໃນການເຄົາລົບລະບຽບກົດໝາຍ ພ້ອມທັງສະ

ກີດກັ້ນການລະເມີດລະບຽບກົດໝາຍ ກ່ຽວກັບການຄຸ້ມຄອງການຄ້າ, ການດຳເນີນທຸລະກິດທີ່ບໍ່ມີໃບທະບຽນວິສາຫະກິດ ແລະການຄ້າສິນຄ້ານອກລະບົບ ແນໃສ່ສົ່ງເສີມ ແລະປົກປ້ອງ ຫົວໜ່ວຍທຸລະກິດການຄ້າທີ່ເຄື່ອນໄຫວຖືກຕ້ອງ, ສອດຄ່ອງກັບລະບຽບກົດໝາຍ ແລະເປັນໄປຕາມກົນໄກເສດຖະກິດຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ, ສົ່ງເສີມການຜະລິດສິນຄ້າ, ທັງເປັນການປະກອບສ່ວນເຂົ້າໃນວຽກງານການຄຸ້ມຄອງສິນຄ້າ, ລາຄາ ແລະປົກ ປ້ອງສິດຜົນປະໂຫຍດຂອງຜູ້ຊົມໃຊ້.

**ມາດຕາ 3. ລະບົບການຈັດຕັ້ງ ຂອງອົງການປະຕິບັດວຽກງານກວດກາການຄ້າ**

ອົງການປະຕິບັດວຽກງານກວດກາການຄ້າປະກອບມີ 3 ຂັ້ນ ແລະແຕ່ລະຂັ້ນມີພາກສ່ວນຊ່ວຍວຽກດັ່ງນີ້:

ຂັ້ນສູນກາງແມ່ນ ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍມີພະແນກກວດກາການຄ້າ ເປັນຜູ້ຊ່ວຍວຽກ;

ຂັ້ນແຂວງແມ່ນ ຂະແໜງການຄ້າພາຍໃນ, ພະແນກອຸດສາຫະກຳ ແລະ ການຄ້າ ໂດຍມີໜ່ວຍງານກວດກາການຄ້າຊ່ວຍວຽກ;

ຂັ້ນເມືອງແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ໂດຍມີຈຸງານກວດກາການຄ້າ ຫຼືພະນັກງານທີ່ເຮັດໜ້າທີ່ຄຸ້ມຄອງການຄ້າພາຍໃນ ເປັນຜູ້ຊ່ວຍວຽກ.

## ໝວດ 2
## ພາລະບົດບາດ, ສິດ, ໜ້າທີ່ ຂອງອົງການປະຕິບັດວຽກງານກວດກາການຄ້າ

**ມາດຕາ 4. ພາລະບົດບາດຂອງອົງການປະຕິບັດວຽກງານກວດກາການຄ້າ**

ອົງການປະຕິບັດວຽກງານກວດກາການຄ້າ ມີພາລະບົດບາດເປັນເສນາທິການໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ໃນການກວດກາການລະເມີດລະບຽບກົດໝາຍ ກ່ຽວກັບການຄຸ້ມຄອງການຄ້າ, ການດຳເນີນທຸລະກິດ ທີ່ບໍ່ມີໃບທະບຽນວິສາຫະກິດ ແລະ ການຄ້າ ສິນຄ້ານອກລະບົບທຸກຮູບແບບ ໃນຂອບເຂດທົ່ວປະເທດ.

ອົງການປະຕິບັດວຽກງານກວດກາການຄ້າ ຂັ້ນສູນກາງ (ກົມການຄ້າພາຍໃນ) ເປັນເສນາທິການໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ໃນການຊີ້ນຳ, ນຳພາ ການຈັດຕັ້ງປະຕິບັດວຽກງານກວດກາການຄ້າໃນຂອບ ເຂດທົ່ວປະເທດ.

ອົງການປະຕິບັດວຽກງານກວດກາການຄ້າ ຂັ້ນແຂວງ ເປັນເສນາທິການໃຫ້ ອຳນາດການປົກຄອງແຂວງ, ນະຄອນຫຼວງ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ, ໃນການປະຕິບັດວຽກງານກວດກາການຄ້າ ແລະ ຊີ້ນຳ, ນຳພາ ການຈັດຕັ້ງປະຕິບັດ ວຽກງານກວດກາການຄ້າ ຂັ້ນເມືອງ ໃນຂອບເຂດແຂວງຕົນເອງ.

ອົງການປະຕິບັດວຽກງານກວດກາການຄ້າຂັ້ນເມືອງ ເປັນເສນາທິການໃຫ້ ອຳນາດການປົກຄອງເມືອງ ແລະພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນການປະຕິບັດວຽກງານກວດກາການຄ້າ ໃນຂອບເຂດເມືອງຂອງຕົນ.